ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ທົບທວນການບໍລິການບໍລິສັດເຊົ່າສິນເຊື່ອ ແລະ ໂຮງຊວດຈຳ




ໃນຕອນເຊົ້າຂອງວັນທີ 17 ມີນາ 2017 ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວທຸລະກິດບໍລິສັດເຊົ່າສິນເຊື່ອ ແລະ ໂຮງຊວດຈຳ ປະຈຳປີ 2016 ຂຶ້ນ ຢູ່ທີ່ສູນຝຶກອົບຮົມ ແລະ ການຮ່ວມມືລາວ-ຍີ່ປຸ່ນ, ນະຄອນຫຼວງວຽງຈັນ ໂດຍພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ. ພ້ອມນີ້, ກໍ່ມີຄະນະກົມຈາກ ທຫລ, ບັນດາເຈົ້າເມືອງພາຍໃນນະ ຄອນຫຼວງວຽງຈັນ, ຕົວແທນຈາກບໍລິສັດເຊົ່າສິນເຊື່ອ ແລະ ໂຮງຊວດຈຳ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.





ທ່ານ ວິໄລມິດ ອັກຄະວົງ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນ, ທຫລ ໄດ້ລາຍງານໂດຍຫຍໍ້ກ່ຽວກັບພາບລວມການຄຸ້ມຄອງທຸລະກິດໂຮງຊວດຈຳ ແລະ ບໍລິສັດເຊົ່າສິນເຊື່ອ ປະຈຳປີ 2016, ການເຄື່ອນໄຫວທຸລະກິດ

ຂອງໂຮງຊວດຈຳ ແລະ ບໍລິສັດເຊົ່າສິນເຊື່ອ ໃນໄລຍະປີ 2016, ດ້ານດີ, ຂໍ້ຄົງຄ້າງ ແລະ ບັນດາສິ່ງທ້າທາຍຕ່າງໆໃນການຄຸ້ມຄອງການດຳເນີນທຸລະກິດຂອງໂຮງຊວດຈຳ ແລະ ບໍລິສັດເຊົ່າສິນເຊື່ອ ໃນໄລຍະ 1 ປີ ພ້ອມວິໄສທັດໃນຕໍ່ໜ້າ.

ກອງປະຊຸມສະຫຼຸບການເຄື່ອນໄຫວທຸລະກິດບໍລິສັດເຊົ່າສິນເຊື່ອ ແລະ ໂຮງຊວດຈຳ ປະຈຳປີ 2016 ແມ່ນໄດ້ດຳເນີນຢ່າງຕໍ່ເນື່ອງໃນທຸກປີ ໂດຍຈຸດປະສົງຂອງການຈັດກອງປະຊຸມດັ່ງກ່າວແມ່ນເພື່ອຈັດເວທີໃຫ້ພາກສ່ວນບໍລິສັດເຊົ່າສິນເຊື່ອ, ໂຮງຊວດຈຳ ແລະ ພາກລັດ ໄດ້ມີໂອກາດແລກປ່ຽນບົດຮຽນ ແລະ ສ້າງຄວາມເຂົ້າໃຈລະຫວ່າງຜູ້ຄຸ້ມຄອງ ແລະ ຜູ້ຖືກຄຸ້ມຄອງ ເຊິ່ງໃນຜ່ານມາບັນດາບໍລິສັດເຊົ່າສິນເຊື່ອ ແລະ ໂຮງຊວດຈຳຕ່າງໆກໍ່ໄດ້ປະສົບບັນຫາໃນການດຳເນີນທຸລະກິດ ເປັນຕົ້ນການໃຫ້ບໍລິການລູກຄ້າທີ່ບໍ່ມີຄວາມຈິງໃຈ, ເຫດສຸດວິໄສທີ່ເກີດຂຶ້ນກັບລູກຄ້າ, ຄວາມສ່ຽງທາງທຸລະກິດ, ບັນຫາທຶນ, ຂອດການປະສານງານກັບພາກລັດ, ຂັ້ນຕອນການດຳເນີນຄະດີກັບລູກຄ້າທີ່ລະເມີດສັນຍາ, ການເຂົ້າມາມີສ່ວນຮ່ວມຂອງປະກັນໄພທີ່ຍັງບໍ່ສາມາດຕອບສະໜອງໄດ້ເຕັມທີ່ ແລະ ບັນດາຄວາມສ່ຽງດ້ານອື່ນໆອີກ.

ທ່ານຮອງຜູ້ວ່າການ ທຫລ ໄດ້ເນັ້ນວ່າ: ທຸລະກິດເຊົ່າສິນເຊື່ອ ແລະ ໂຮງຊວດຈຳ ກໍ່ເປັນວຽກງານໜຶ່ງຂອງຂະແໜງການເງິນ ທີ່ພັກ ແລະ ລັດຖະບານ ໄດ້ເອົາໃຈໃສ່ໃຫ້ຄວາມສຳຄັນເປັນພິເສດ ໂດຍໄດ້ມີການວາງນະໂຍບາຍສະເພາະ ເພື່ອແນໃສ່ສ້າງເງື່ອນໄຂເອື້ອອຳນວຍໃນດ້ານຕ່າງໆ ເພື່ອສົ່ງເສີມບັນດາທຸລະກິດເຊົ່າສິນເຊື່ອ ແລະ ທຸລະກິດໂຮງຊວດຈຳ ໃຫ້ມີການຂະຫຍາຍຕົວຢູ່ແຕ່ລະເມືອງ ເພື່ອປະກອບສ່ວນສະໜອງທຶນຮອນໃຫ້ແກ່ສະມາຊິກ ກໍ່ຄືປະຊາຊົນໃນການແກ້ໄຂຄວາມທຸກຍາກທີ່ຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາກໍ່ຄືວຽກງານ 3 ສ້າງ ບົນພື້ນຖານການຕິດຕາມການເຄື່ອນໄຫວວຽກງານດັ່ງກ່າວ ໃນປີຜ່ານມາໄດ້ມີການພັດທະນາການໃຫ້ບໍລິການເຊົ່າສິນເຊື່ອ ແລະ ໂຮງຊວດຈຳ ແມ່ນມີຄວາມຄືບໜ້າໃນຫຼາຍດ້ານພໍສົມຄວນ ເປັນຕົ້ນ: ການສ້າງຄວາມເຂັ້ມແຂງທາງດ້ານວິຊາສະເພາະທີ່ເຮັດໃຫ້ທຸລະກິດເຊົ່າສິນເຊື່ອ ແລະ ໂຮງຊວດຈຳ ໄດ້ມີການປັບຕົວໃນທ່ວງທ່າທີ່ດີຂຶ້ນເປັນກ້າວໆ ອັນເນື່ອງມາຈາກການປະຕິບັດບົດບາດໜ້າທີ່ກໍ່ຄືຜົນຈາກການຮ່ວມມືຂອງບັນດາພາກສ່ວນຕ່າງໆ ນັບແຕ່ຂັ້ນວາງນະໂຍບາຍ, ພາກສ່ວນຄຸ້ມຄອງ ແລະ ຂອດການປະສານງານ ແມ່ນໄດ້ມີການປັບປຸງຢ່າງເປັນລະບົບ ເຮັດໃຫ້ການເຄື່ອນໄຫວໂດຍລວມມີຄວາມຮັດກຸມ ແລະ ສະດວກຫຼາຍຂຶ້ນ.




*❋ ຂ່າວ-ພາບ: ສົມອຶກ ເຄນຄຳແພງ*

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*